# ກອງປະຊຸມປຶກສາຫາລື ກ່ຽວກັບການນຳໃຊ້ພາສາລາວໃນປຶ້ມ ແບບຮຽນ ສຳລັບອະນຸບານ ແລະ ສາມັນສຶກສາ

ເພື່ອໃຫ້ການນຳໃຊ້ພາສາລາວໃນປຶ້ມແບບຮຽນ ສຳລັບອະນຸບານ ແລະ ສາມັນສຶກສາ ມີປະສິດທິຜົນ ແລະ ປາກົດຜົນເປັນຈິງໄປພ້ອມໆກັນ ດັ່ງນັ້ນ ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ ເຊິ່ງເປັນຜູ້ຮັບຜິດຊອບໂດຍກົງ ຈຶ່ງໄດ້ຈັດກອງປະຊຸມປຶກຫາລືກ່ຽວກັບການນຳໃຊ້ພາສາລາວໃນປຶ້ມແບບຮຽນສຳລັບອະນຸບານ ແລະ ສາມັນສຶກສາ ຂຶ້ນ ໃນວັນທີ 3 ເມສາ 2017 ທີ່ຫ້ອງປະຊຸມຊັ້ນສອງຂອງ ສ.ວ.ສ ໂດຍການເປັນປະທານຂອງ ທ່ານ ຄຳພາຍ ສີສະຫວັນ ຮອງລັດຖະມົນຕີກະຊວງສຶກສາທິການ ແລະ ກິລາ. ຜູ້ເຂົ້າຮ່ວມໃນກອງປະຊຸມມີ ທ່ານ ຜູ້ອຳນວຍການ, ຮອງອຳນວຍການ ສ.ວ.ສ ພ້ອມດ້ວຍ ຄະນະຮັບຜິດຊອບ ລວມທັງໝົດມີ 20 ກວ່າທ່ານ.

ຈຸດປະສົງ ໃນການຈັດກອງປະຊຸມໃນຄັ້ງນີ້ກໍ ເພື່ອປຶກສາຫາລື ບັນດາຫົວຂໍ້ຫຼັກ ດັ່ງນີ້:

- ການນຳໃຊ້ຕົວອັກສອນໃນປຶ້ມແບບຮຽນ
- ການນຳໃຊ້ຕົວ ຣ
- ຄຳທີ່ໃຊ້ສະຫຼະ ໄx
- ການຂຽນຄຳທີ່ມີເຄົ້າມາຈາກພາສາຕ່າງປະເທດ
- ການຂຽນ ຫຼື ພິມສະຫຼະເທິງ, ລຸ່ມ ແລະ ວັນນະຍຸດໃນເວລາມີຕົວອັກສອນຄວບ, ປະສົມ
- ການຂຽນ ຫຼື ພິມສະຫຼະ x̂ວະ ເxາະ ທີ່ມີຕົວສະກົດ
- ສະຫຼຸບຫຍໍ້ວິທີໃຊ້ບາງເຄື່ອງໝາຍວັກຕອນໃນເວລາຂຽນ ແລະ ພິມ
- ການຍະຫວ່າງ
- ການເລືອກໃຊ້ຄຳບາງຄຳທີ່ໃຊ້ໄດ້ທັງສອງ
- ການເລືອກໃຊ້ຄຳທີ່ກຳນົດ
- ການໃຊ້ອັກສອນຫຍໍ້
- ການຂຽນຄຳໃນປະໂຫຍກພາສາລາວ
- ການເລືອກນຳໃຊ້ຟອນ (Font)
- ການນຳໃຊ້ເຄື່ອງໝາຍ ຈ້ຳ (.) ຈຸດ (,) ໃນຄະນິດສາດ.

ກອງປະຊຸມໄດ້ຮັບຮອງເອົາ ຄວາມຄິດຄຳເຫັນອັນເປັນປະໂຫຍດ ຈາກທ່ານປະທານ ແລະ ບັນດາຄະນະຮັບຜິດຊອບ ເຮັດໃຫ້ເນື້ອໃນທີ່ນຳມາສະເໜີມີຄວາມສົມບູນຂຶ້ນ. ກອງປະຊຸມດຳເນີນໄປ **ເຄິ່ງ** ວັນ ຈຶ່ງໄດ້ປິດລົງດ້ວຍຜົນສຳເລັດຢ່າງຈົບງາມ.



ສ. ຄຸນປະເສີດ